# ແກ໊ສຄລໍຣີນ

## ແກ໊ສຄລໍຣີນແມ່ນຫຍັງ?

ແກ໊ສຄລໍຣີນມາຈາກທາດຄລໍຣີນ ເຊິ່ງເປັນສານທີ່ນໍາໃຊ້ໃນໂຮງຈັກໂຮງງານ, ໃນຫ້ອງທົດລອງ, ແລະໃນເຄື່ອງຜະລິດຕະພັນບາງຢ່າງທີ່ໃຊ້ໃນເຮືອນຊານ. ເມື່ອຄລໍຣີນເປັນທາດແຫລວແລ້ວປະສົມກັບອາກາດ ມັນກາຍເປັນແກ໊ສຄລໍຣີນ.

## ແກ໊ສຄລໍຣີນມີລັກສະນະແນວໃດ?

- ແກ໊ສຄລໍຣີນມີສີເຫລືອງອອກຂຽວແລະມີກິ່ນແຮງເຊັ່ນດຽວກັບຢາຊັກຟອກ, ແລະ
- ມັນແລ່ນນໍາພື້ນດິນແລະຂະຫຍາຍຕົວຢ່າງໄວວາ.

## ຂ້າພະເຈົ້າອາດຈະຖືກແກ໊ສຄລໍຣີນໄດ້ແນວໃດ?

ທ່ານອາດຈະຖືກແກ໊ສຄລໍຣີນ ຖ້າຫາກວ່າ:

- ທ່ານປະສົມຢາຊັກຟອກກັບຢາຜະລິດຕະພັນອື່ນໆທີ່ໃຊ້ທໍາຄວາມສະອາດ,
- ເກີດມີອຸປະຕິເຫດອຸດສາຫະກໍາ, ຫລື
- ຜູ້ກໍ່ການຮ້າຍໄດ້ປ່ອຍແກ໊ສຄລໍຣີນໃນອາກາດ.

## ແກ໊ສຄລໍຣີນອັນຕະລາຍບໍ?

ອັນຕະລາຍ. ແກ໊ສຄລໍຣີນແມ່ນສານພິດ. ທ່ານສາມາດຕາຍໄດ້ຖ້າຫາຍໃຈເອົາສານນີ້.

## ມີອາການແນວໃດແດ່?

ແກ໊ສຄລໍຣີນໃນປະລິມານຫລາຍສາມາດເກີດອາການຕໍ່ໄປນີ້ຢ່າງໄວວາ:

- ແສບດັງ, ຄໍ, ແລະ ຕາ
- ຜິວໜັງເຈັບແສບ, ແດງ, ແລະ ໂພງ
- ນໍ້າຕາໄຫລ, ຕາມົວ
- ໄອແລະຫາຍໃຈຝືດ
- ປວດຮາກແລະຮາກ

ແກ໊ສຄລໍຣີນໃນປະລິມານໜ້ອຍ, ອາການອາດຈະສະແດງອອກຕາມຫລັງ.

## ຖ້າຫາຍໃຈເອົາແກ໊ສຄລໍຣີນເຂົ້າໄປ ຂ້າພະເຈົ້າຈະຕາຍບໍ?

ບັນຫານີ້ຈະຂຶ້ນກັບປະລິມານທີ່ທ່ານຫາຍໃຈເອົາ. ຖ້າທ່ານລອດຊີວິດ, ທ່ານກໍຕ້ອງໄດ້ຢູ່ໂຮງໝໍເພື່ອຮັບການປິ່ນປົວຕໍ່ໄປ.

## ຈະເຮັດແນວໃດ ຖ້າຫາກຂ້າພະເຈົ້າຄິດວ່າ ຂ້າພະເຈົ້າໄດ້ສໍາພັດກັບແກ໊ສຄລໍຣີນແລ້ວ?

- **ຫຍັບອອກໄປ.**
- **ແກ້ເຄື່ອງນຸ່ງອອກ, ປິດເກີບແລະແວ່ນຕາ ຫລືຄອນແທັກເລັນອອກ.** ພະຍາຍາມບໍ່ແກ້ເຄື່ອງນຸ່ງອອກທາງຫົວເພາະເຄື່ອງນຸ່ງອາດມີທາດຄລໍຣີນຕິດຢູ່ນໍາ. ໃຫ້ຕັດເຄື່ອງນຸ່ງອອກແທນການແກ້ອອກ.



- **ອາບນໍ້າ ຫລືເຊັດຕົນໂຕ.** ຖ້າມີສະບູໃຫ້ໃສ່ສະບູຫລາຍໆ.
- ຖ້າແສບຕາ**ໃຫ້ເອົານໍ້າເທໃສ່ຕາ**ປະມານ 10 ເຖິງ 15 ນາທີ. ຖ້າໄດ້ລ້າງແວ່ນຕາ ທ່ານສາມາດໃສ່ຕໍ່ໄດ້ແຕ່ບໍ່ໃຫ້ໃສ່ຄອນແທັກເລັນຄູ່ນັ້ນອີກ.

- *ໂທຫາ 911 ທັນທີເພື່ອຮັບຄວາມຊ່ວຍເຫລືອທາງການແພດ!*



ຈາກນັ້ນຂໍໃຫ້ເຮັດສິ່ງຕໍ່ໄປນີ້:

- **ເອົາເຄື່ອງນຸ່ງແລະຄອນແທັກເລັນທີ່ຕິດສານພິດໃສ່ຖົງຢາງແລ້ວອັດໃຫ້ແຈບ.** (ໃສ່ຖົງມືຢາງ ຫລືຖົງຢາງເພື່ອປ້ອງກັນມື.) ໃສ່ຖົງຢາງນັ້ນໃນອີກຖົງຢາງໜຶ່ງແລ້ວອັດໃຫ້ແຈບ.
- ແຈ້ງໜ່ວຍງານສຸກເສີນບ່ອນທີ່ທ່ານປະຖົງນັ້ນໄວ້.

## ສໍາລັບຂໍ້ມູນເພີ່ມເຕີມຂໍໃຫ້ຕິດຕໍ່ ...

ໂທຫາ CDC (Centers for Disease Control) ສໍາລັບຂໍ້ມູນທີ່ເປັນພາສາອັງກິດ:
800-CDC-INFO (800-232-4636)
888-232-6348 (TTY)

ຫລືເຂົ້າໄປ: www.bt.cdc.gov/chemical
www.dhs.ca.gov/epo